ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

LNSW CO., LTD
Ref: 007
Date of Receipt 05 FEB 2019
Director General
Finance
Operation
Administrative
Project

ກະຊວງອຸດສາຫະກຳ ແລະ ການຄ້າ
ກົມການນຳເຂົ້າ ແລະ ສົ່ງອອກ

ເລກທີ 0726 /ກຂອ.ບຂອ

ນະຄອນຫຼວງວຽງຈັນ, ວັນທີ 04 ກຸມພາ 2019

# ແຈ້ງການ

ເຖິງ: ບັນດາທ່ານອຳນວຍການບໍລິສັດນຳເຂົ້າ ແລະ ສົ່ງອອກ ຍານພາຫະນະ.

ເລື່ອງ: ເລີ່ມນຳໃຊ້ການອອກອະນຸຍາດນຳເຂົ້າ ແລະ ສົ່ງອອກຍານພາຫະນະຜ່ານລະບົບແຈ້ງພາສີປະຕູດຽວ (Lao National Single Window - LNSW).

- ອີງຕາມຂໍ້ຕົກລົງວ່າດ້ວຍການອະນຸມັດນຳໃຊ້ລະບົບແຈ້ງພາສີປະຕູດຽວ ເລກທີ 0204/ກງ, ລົງວັນທີ 15 ມັງກອນ 2019

ກົມການນຳເຂົ້າ ແລະ ສົ່ງອອກ (ກຂອ) ຂໍຖືເປັນກຽດແຈ້ງມາຍັງ ທ່ານ ຊາບວ່າ: ເພື່ອເປັນການປະຕິບັດບັນດານະໂຍບາຍຂອງລັດຖະບານໃນການປັບປຸງສະພາບແວດລ້ອມໃນການດຳເນີນທຸລະກິດໃຫ້ມີຄວາມສະດວກດີຍິ່ງຂຶ້ນ, ກົມການນຳເຂົ້າ ແລະ ສົ່ງອອກ ຈະໄດ້ເລີ່ມອອກໃບອະນຸຍາດນຳເຂົ້າ ແລະ ສົ່ງອອກຍານພາຫະນະຜ່ານລະບົບແຈ້ງພາສີປະຕູດຽວ (ລະບົບໃໝ່) ໂດຍຜ່ານເວບໄຊ www.laonsw.net ແຕ່ວັນທີ 25 ກຸມພາ ເປັນຕົ້ນໄປ. ສະນັ້ນ, ຈຶ່ງແຈ້ງມາຍັງບັນດາບໍລິສັດນຳເຂົ້າ ແລະ ສົ່ງອອກຍານພາຫະນະໃຫ້ຮີບຮ້ອນສະເໜີ ຫາ ກົມພາສີ ເພື່ອຂໍລະຫັດຜູ້ນຳໃຊ້ລະບົບດັ່ງກ່າວ ໂດຍປະກອບເອກະສານຕາມແບບຟອມເອກະສານຊ້ອນທ້າຍ 2 ຂອງ ບົດແນະນຳວ່າດ້ວຍການນຳໃຊ້ລະບົບແຈ້ງພາສີປະຕູດຽວ ເລກທີ 4217/ກງ, ລົງວັນທີ 28 ທັນວາ 2018.

ໃນໄລຍະເລີ່ມຕົ້ນການນຳໃຊ້ລະບົບໃໝ່ບໍລິສັດສາມາດສືບຕໍ່ສະເໜີຂໍອອກໃບອະນຸຍາດນຳເຂົ້າແບບເກົ່າ (ອອກໃບອະນຸຍາດແບບລະບົບເຈັ້ຍ) ຈົນກວ່າຈະມີໜັງສືແຈ້ງໃຫ້ນຳໃຊ້ລະບົບໃໝ່ໂດຍສົມບູນ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງ ທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມນີ້ດ້ວຍ.

ຫົວໜ້າກົມ

ສຸລິນ ພິລາວົງ